# ຮວມຄຳສັ່ງສອນຂອງພວກທຳນວາຍ

## ໃຈຄວາມສຳຄັນ ມາລາກີ ໓:໗

### ໑. "ຈົ່ງຫລົບມາຫາເຮົາ ເຮົາຈະຄືນມາຫາພວກທ່ານ"

ພຣະເຈົ້າຊົງປະທານຄຳສັນຍາໃຫ້ແກ່ພວກອິສຣາເອັນ ແຕ່ພວກອິສຣາເອັນບໍ່ໄດ້ປະຕິບັດຕາມຄຳສັນຍານັ້ນ ພວກເຂົາເປັນກະບົດຕໍ່ພຣະເຈົ້າ ໂດຍພາກັນເຄົາຣົບຮູບພຣະຂອງຊາດອື່ນໆ ພວກເຂົາລະເມີດຄຳສັ່ງສອນຂອງພຣະເຈົ້າຢູ່ເລື້ອຍໆ ດັ່ງນັ້ນພຣະອົງຈຶ່ງບໍ່ຊົງຊ່ວຍເຫລືອໃຫ້ພວກເຂົາລອດພົ້ນຕາມຄຳສັນຍາຂອງພຣະອົງ ເທົ່າເວັ້ນໄວ້ພວກເຂົາຈະຫລົບມາຫາພຣະອົງອີກ

ດ້ວຍເຫດນັ້ນມາລາກີຈຶ່ງປະກາດວ່າ "ຈົ່ງຫລົບມາຫາເຮົາ (ພຣະເຈົ້າ) ເຮົາຈະຄືນມາຊ່ວຍພວກທ່ານ"

### ໒. ວ່າດ້ວຍຄວາມຫວັງແລະຄອງຫາເມຊີອາ

ໃນໜັງສືຂອງພວກທຳນວາຍໄດ້ປະກາດຢູ່ເລື້ອຍ ວ່າ "ພຣະເມຊີອາຜູ້ຊົງເປັນກະສັດຈະສະເດັດລົງມາເກີດໃນໂລກນີ້" ເພື່ອຊ່ວຍເຫລືອພວກຢູດາໃຫ້ພົ້ນຈາກບາບ, ແລະພົ້ນຈາກສັດຕູຂອງພວກເຂົາ ເອຊາອີ ໙:໖–໗; ໕:໘

### ໓. ວ່າດ້ວຍເມຊີອາ

ຄຳວ່າ "ເມຊີ" ເປັນພາສາເຮັບເຣີມາຈາກຄຳວ່າ "ເມຊີອາ" ແປວ່າ "ຜູ້ພຣະເຈົ້າຊົງຊົງໂສມທາ" ແລ້ວພວກນັກປາດ ໗໐ ຄົນ ໄດ້ແປ

ພຣະນາມນີ້ວ່າ "ຄຣິດ" ດັ່ງທີ່ມີຄຳຂຽນຢູ່ໃນພຣະຄັມພີໃໝ່ສບັບພາສາເຣເລນນັ້ນ

ສຳລັບພຣະຄັມພີເດີມໄດ້ອະທິບາຍເຖິງ "ເມຊີອາ" ໄວ້ດັ່ງນີ້

໑. ເອມານູເອັນ (ເອຊາອີ ໗:໑໔) ຄືມີຍິງສາວພົມມະຈາຣີຜູ້ນຶ່ງຍັງບໍ່ມີຜົວແລະບໍ່ເຄີຍຮ່ວມກັບຊາຍໃດຈັກເທື່ອ ແຕ່ນາງໄດ້ຄອດລູກຊາຍອອກມາຊື່ວ່າ "ເອມານູເອັນ" ການອັສຈັນນີ້ໄດ້ເກີດຂື້ນໃນຄອບຄົວຂອງກະສັດດາວິດເອງ ຄຳວ່າ "ເອມານູເອັນ" ແປວ່າ "ພຣະເຈົ້າຊົງສຖິດຢູ່ທ່າມກາງພວກອິສຣາເອັນ"

໒. ຂ້າໃຊ້ຜູ້ລຳບາກ ຄືໃນເວລາທ່ານເອຊາອີຂຽນກ່ຽວກັບຜູ້ຮັບໃຊ້ ເພິ່ນໄດ້ໝາຍເອົາພວກອິສຣາເອັນທີ່ຮັບໃຊ້ພຣະເຈົ້າ ແຕ່ລາງເທື່ອເພິ່ນກໍບອກວ່າ ເມຊີອາ ນັ້ນຄືຜູ້ທີ່ຈະໄຖ່ເອົາໂທດຂອງມະນຸດສໂລກດ້ວຍການຖືກທໍຣະມານ

໓. ຍອດຂອງຕົ້ນໄມ້ ພຣະເຢຊູຜູ້ຊົງເປັນເມຊີອາ ບາງຄັ້ງກໍປຽບໃສ່ຍອດຂອງຕົ້ນໄມ້ ຄືພຣະອົງຊົງເປັນຄວາມຫວັງຂອງພວກອິສຣາເອັນ ພວກເຂົາຈະຖືກທຳລາຍ ແລ້ວພຣະອົງຈະຕັ້ງພວກເຂົາຂື້ນມາອີກ

໔. ລູກມະນຸດ (ດານຽນ ໗:໑໓–໑໔) ຄືພຣະອົງຊົງເປັນພຣະເຈົ້າ ແຕ່ເກີດມາເປັນມະນຸດ

໕. ເຊື້ອສາຍຂອງກະສັດດາວິດຫລືບຸດຂອງກະສັດດາວິດ (ຄຳເພງ ໒:໗໒; ຊາເໝືອນ ໗:໑໒–໑໓)

໖. ດວງດາວແລະຄ້ອນຂອງກະສັດ (ຈົດເຊັນບັນຊີ ໒໔:໑໗)

໗. ຊີໂລ (ຕົ້ນເດີມ ໔໙:໑໐) ຄຳນີ້ຍັງເຂົ້າໃຈຍາກຢູ່ວ່າ ໝາຍຄວາມຢ່າງໃດແທ້ ແຕ່ມີຄຣູສອນລາງຄົນໃຫ້ຄຳແປວ່າ ຊີໂລຄື "ເຈົ້າແຫ່ງຄວາມສຸກສຳຣານ"

໘. ເຈົ້າບ່າວ (ຄຳເພງ ໔໕) ຄືເປັນຄຳອຸປມາເຖິງເມຊີອາ ຜູ້ຊຶ່ງເປັນກະສັດ ຊຶ່ງຊົງຮັບເອົາຄຣິສຕະຈັກເໝືອນເຈົ້າບ່າວຮັບເອົາເຈົ້າສາວ

໙ ຫີນຫົວແຈ (ເອຊາອີ ໒໘:໑໖) ໃນໜັງສືດານຽນບອກວ່າຫີນນັ້ນຄືຣາຊອານາຈັກຂອງເມຊີອາ ຊຶ່ງຈະທຳລາຍອານາຈັກທັງຫລາຍ (໒:໓໔–໔໕) ສນັ້ນຫີນຫົວແຈຈຶ່ງປຽບເຖິງພຣະເຢຊູເຈົ້າ (ຄຳເພງ ໑໑໘:໒໒–໒໓ ລູກາ ໒໐:໑໗; ໑ ເປໂຕ ໒:໔–໗)

໑໐. ທູດຂອງພຣະເຢໂຮວາ ພວກຄຣູສອນທັງຫລາຍຖືວ່າ ທູດຄືພຣະເຢຊູເຈົ້າ ແລະຄຳນີ້ໄດ້ຢູ່ໃນພຣະຄັມພີເດີມຫລາຍເຫລັ້ມດ້ວຍກັນຄື ໃນຕົ້ນເດີມ ໑໖:໑໘:໒໒, ອົພຍົກ ໓, ໂຍຊວຍ ໕, ຜູ້ຕັດສິນ ໖

# ວ່າດ້ວຍຄາວສໄມແຕ່ມາລາກີເຖິງມັດທາຍ

ຕັ້ງແຕ່ສໄມມາລາກີຈົນເຖິງສໄມຂອງມັດທາຍເປັນເວລາປະມານ ໔໐໐ ປີ ສ່ວນພຣະຄັມພີກໍບໍ່ໄດ້ແຈ້ງເຫດການທີ່ເກີດຂຶ້ນໃນຊົ່ວເວລານັ້ນໄວ້ ແຕ່ປະວັດສາດບອກໃຫ້ຮູ້ວ່າ ພວກຢູດາໄດ້ຕົກຢູ່ພາຍໃຕ້ອານາ-ຈັກແຫ່ງຄວາມຝັນຂອງກະສັດເນບູກາດເນຊາເຣ (ດານຽນ ໒:໓໑–໔໕) ດັງນີ້

໑. ຣາຊອານາຈັກເປເຣເຊ ກ່ອນ ຄ.ສ. ໔໓໐–໓໓໒ ໃນຄາວຕົກຢູ່ໃນອານາຈັກນີ້ພວກຢູດາບໍ່ມີຄວາມຍາກລຳບາກສິ່ງໃດ

໒. ຣາຊອານາຈັກເຫເລນ ກ່ອນ ຄ.ສ. ໓໓໑–໑໖໗ ໃນຄາວຕົກຢູ່ໃນອານາຈັກນີ້ ພວກເຫເລນໄດ້ໄຊຊະນະພວກເປເຣເຊ ໂດຍການນຳຂອງນາຍພົນຄົນເຫເລນຜູ້ນຶ່ງຊື່ອາເລັກຊັນເດ Alexander ເມື່ອນາຍພົນຜູ້ນີ້ເປັນຫົວໜ້າປົກຄອງອານາຈັກນີ້ ພວກຢູດາກໍມີຄວາມສຸກສະບາຍແລະຈະເຣີນເຕີບໂຕຂຶ້ນ ຈົນສາມາດໄປຈັດຕັ້ງແຂວງອື່ນ ໆ ຂຶ້ນທົ່ວອານາຈັກນັ້ນ ສ່ວນອາເລັກຊັນເດກໍໄດ້ສ້າງເມືອງໃໝ່ຂຶ້ນໃນປະເທດເອຢິບໄຕຊື່ອາເລັກຊັນເດ ແລ້ວພວກຢູດາໄດ້ມາກັນໄປອາໄສຢູ່ໃນເມືອງນີ້ຫລາຍຄົນ

ຕົກມາໃນປີ ໓໒໓ ອາເລັກຊັນເດກໍຕາຍໄປ ແລະອານາຈັກຂອງເຂົາກໍຖືກແບ່ງເປັນ ໔ ຕອນ ຕໍ່ແຕ່ນັ້ນໄປຈົນເຖິງປີ ໑໖໗ ພວກ

ຢູດາກໍຕົກຢູ່ໃຕ້ອຳນາດຂອງຄົນຜູ້ນຶ່ງຊື່ ປາຕໍເລເມ ຟີລາເດັນເຟັຍ ຄົນຜູ້ນີ້ໄດ້ຕົກເຕີມໃຫ້ຊາວຢູດາແປພຣະຄັມພີເປັນພາສາເຣເລນ ແລ້ວໄດ້ມີພວກນັກປາດ ໗໐ ຄົນຮ່ວມກັນແປທີ່ເມືອງອາເລັກຊັນເດ ຄວາມຈິງແລ້ວແມ່ນພຣະເຈົ້າເອງຊົງເປັນຜູ້ນຳພາໃນການແປນັ້ນ

ຕໍ່ມາຫລາຍປີພວກທີ່ມີອຳນາດກໍຖືກປ່ຽນໄປໂດຍມີຄົນຜູ້ນຶ່ງຊື່ອັນຕຽອົກເອປີພານ Antiochus Epiphane (໑໗໔-໑໖໔) ເຂົາຜູ້ນີ້ເປັນຄົນເຂັ້ມແຂງແລະບໍ່ມັກສາສນາຢູດາ ເພິ່ນໄດ້ທຳລາຍວິຫານໃນກຸງເຢຣູຊາເລັມ ແລ້ວໄດ້ຈັດຕັ້ງຮູບພຣະຂຶ້ນໄວ້ໃນວິຫານນັ້ນ ພ້ອມທັງໄດ້ນຳເອົາໝູໂຕແມ່ໄປຖວາຍບູຊາ ເຫດການນີ້ໄດ້ເກີດຂຶ້ນຕາມທີ່ມີຜູ້ທຳນວາຍໄວ້ແລ້ວໃນໜັງສືດານຽນ ບົດ ໑໑:໓໑ ຕໍ່ມາໄດ້ມີປະໂລຫິດຜູ້ນຶ່ງໄດ້ທຳການຕໍ່ສູ້ການຊົ່ວຮ້າຍນີ້ ໂດຍໄດ້ຂ້ານາຍທະຫານຜູ້ເປັນຄົນໃຊ້ຂອງອັນຕຽອົກຕາຍ ແລ້ວປະໂລຫິດຜູ້ນີ້ໄດ້ຮວບຮວມເອົາລູກຊາຍຂອງຕົນຫ້າຄົນກັບຊາວຢູດາອື່ນໆ ອີກໂຕນໜີໄປຢູ່ທີ່ພູເຂົາ ເມື່ອຈັດຕັ້ງເປັນກຸ່ມອິສຣະຕໍ່ສູ້ກັບອັນຕຽອົກ ຢູ່ຕໍ່ມາປະໂລຫິດຜູ້ນັ້ນເລີຍຕາຍໄປລູກຊາຍຂອງເພິ່ນຊື່ຢູດາມັກກະເບໄດ້ເປັນຫົວໜ້າແທນ ແລ້ວໃນປີ ໑໖໖ ເຂົາໄດ້ມີໄຊຊະນະ ໄດ້ຊຳຣະວິຫານແລະໄດ້ທຳການບູຊາເປັນປະຈຳທຸກວັນ ຕໍ່ມາພວກຢູດາໄດ້ຖືເອົາເຫດການນີ້ເປັນວັນສລອງທຸກປີ ດັ່ງພວກເຮົາໄດ້ເຫັນໃນໜັງສືໂຢຮັນ ໑໐:໒໒ ວ່າ "ເທສການປະຈຳຊາດເມື່ອຄິດເຖິງວັນນັ້ນ" ເຫດນັ້ນຕັ້ງແຕ່ປີ ໑໖໖ ເຖິງປີ ໖໓ ພວກຢູດາກໍເປັນເອກະຣາດໃນທ່າມກາງອານາຈັກເຣເລັມ ສ່ວນຄອບຄົວຂອງຢູດາມັກກະເບກໍໄດ້ປົກຄອງ

ພວກຢູດາລືບ ໆ ມາ ເມື່ອຢູດາຕາຍກໍມີໂຍນາທານນ້ອງຊາຍເປັນຜູ້ປົກຄອງແລະທັງໄດ້ເປັນມະຫາປະໂລຫິດດ້ວຍ

ແລ້ວຫລັງຈາກນັ້ນ ພວກຢູດາ ກໍແຕກແຍກ ເປັນສອງຝ່າຍ ຄືຝ່າຍ "ຊາດິເຊເອັນ" ຝ່າຍນີ້ເຫັນດີໃຫ້ຜູ້ປົກຄອງເປັນມະຫາປະໂລຫິດ ແລະມີຄວາມຄິດຢ່າງດຽວກັນກັບພວກເຫເລນ ແລະອີກຝ່າຍນຶ່ງຄື "ພວກຟາຣິຊຽນ" ເປັນພວກທີ່ຢູ່ຕ່າງຫາກແລະບໍ່ເຫັນດີນຳພວກເຂົາຖືຕືວ່າເປັນຜູ້ຮັກສາພຣະບັນຍັດ ສົມນັ້ນຈຶ່ງເກີດສົງຄາມຕໍ່ສູ້ກັນຣະຫວ່າງສອງຝ່າຍນີ້ ຈົນເປັນເຫດໃຫ້ເກີດມີທຳນຽມປະຫານຊີວິດເທິງໄມ້ກາງແຂນ

## ຣາຊອານາຈັກໂຣມ ກ່ອນ ຄ.ສ. ໖໓ ປີ

ໃນປີ ໖໓ ຊາວໂຣມໄດ້ຕີເອົາອານາຈັກເຣເລນເພື່ອຕັ້ງເປັນອານາຈັກໂຣມ ນາຍພົນປອມເປ Pompei ໄດ້ລ້ອມກຸງເຢຣູຊາເລັມໄວ້ເຖິງສາມເດືອນ ແລ້ວໄດ້ຕີຊະນະພວກຢູດາແລະຂ້າຕາຍໄປ ໑໒.໐໐໐ ຄົນ ກຸງເຢຣູຊາເລັມແລະບ່ອນສັກສິດໃນວິຫານໄດ້ຖືກທຳລາຍ ຕັ້ງແຕ່ນັ້ນມາພວກຢູດາກໍຕົກເປັນທາດຂອງຊາວໂຣມ

ຕາມໜັງສືຂ່າວປະເສີດບອກວ່າກະສັດເຊຊາແຫ່ງກຸງໂຣມໄດ້ຕັ້ງຜູ້ປົກຄອງໄວ້ຕາມແຂວງຕ່າງ ໆ ຄັ້ງແຣກກະສັດເຊຊາໄດ້ຕັ້ງເຫໂລດລູກອັນຕິປາເຕເປັນກະສັດຂອງພວກຢູດາ ເຫໂລດເປັນຄົນເຂັ້ມແຂງແຕ່ພວກຢູດາບໍ່ມັກເພິ່ນ ສົມນັ້ນເພິ່ນຈຶ່ງຊອກຫາວິທີທາງເຮັດໃຫ້ພວກເຂົາຊອບໃຈ ຄືເພິ່ນໄດ້ສ້າງວິຫານໃໝ່ໃນກຸງເຢຣູຊາເລັມ ເປັນວິຫານທີ່ມີ

ຮູບງາມແລະໃຫຍ່ທີ່ສຸດ   ວິຫານນີ້ໄດ້ສ້າງເປັນເວລາ ໔໐ ປີ ຈິ່ງສຳເຣັດ ແຕ່ກະສັດເຫໂລດກໍໄດ້ເຮັດການຊົ່ວຫລາຍຢ່າງ   ເປັນຕົ້ນກໍໄດ້ສັ່ງໃຫ້ຂ້າພວກເດັກນ້ອຍ ທີ່ມີອາຍຸພຽງ ໒ ປີລົງມາ ເພາະຕ້ອງການຂ້າພຣະເຢຊູທີ່ຢູ່ໃນບ້ານນັ້ນເສັຍ   ຢ້ານວ່າພຣະອົງຈະໄດ້ເປັນກະສັດຂອງຊາວຢູດາ (ມັດທາຍ ໒:໑—໑໘)

ພວກເຮົາຮູ້ຈັກເຣື່ອງຂອງພວກຢູດາ  ໃນສໄມນັ້ນໄດ້ດ້ວຍໜັງສືສີ່ເຫລັ້ມທີ່ປະກາດເຣື່ອງຂອງພຣະເຢຊູ